ເປີດກອງປະຊຸມ ກະສິກຳປ່າໄມ້ທົ໋ວປະເທດ
ກອງປະຊຸມສະຫລຸບວຽກງານ ກະສິກຳ ແລະ ປ່າໄມ້ທົ່ວປະເທດປະຈຳປີ 2011-2012
ຈັດຂຶ້ນໃນເຊົ້າວານນີ້ ທີ່ສະໂມສອນ 21 ມີນາ ເມືອງທ່າແຂກ ແຂວງຄຳມ່ວນ
ໂດຍການເຂົ້າຮ່ວມຂອງ ທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ
ຜູ້ຊີ້ນຳວຽກງານເສດຖະກິດ ທ່ານ ວິໄລວັນ ພົມເຂ
ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ທ່ານເຈົ້າແຂວງໆຄຳມ່ວນ,
ມີບັນດາທ່ານລັດຖະມົນຕີຊ່ວຍ, ຫົວຫນ້າພະແນກ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ວິໄລວັນ ພົມເຂ ລັດຖະ ມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້
ກ່າວທີ່ປະຊຸມວ່າ: ກອງປະຊຸມສະຫລຸບວຽກງານ ກະສິກຳ ແລະ ປ່າໄມ້ທົ່ວປະເທດ
ເພື່ອຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາ ກະສິກຳ ແລະ
ປ່າໄມ້ໃນສົກປີ 2011-2012 ບົນຈິດໃຈອີງໃສ່ 4 ບຸກທະລຸ
ເຊິ່ງໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ
ເປັນໄມ້ຫລາວັດແທກຄື: ບຸກທະລຸທາງດ້ານຈິນຕະນາການ,
ບຸກທະລຸທາງດ້ານບຸກຄະລາກອນ,
ບຸກທະລຸທາງດ້ານກົນໄກລະບອບແບບແຜນວິທີເຮັດວຽກ ແລະ
ບຸກທະລຸທາງດ້ານການແກ້ໄຂຄວາມທຸກຍາກ.

ສ່ວນ ທ່ານ ດຣ. ຕີ ພົມມະສັກ ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ-ປ່າໄມ້ໄດ້
ຜ່ານບົດສະຫລຸບ ການຈັດຕັ້ງປະຕິບັດວຽກງານໃນ 1 ປີຜ່ານມາວ່າ:
ໃນທົ່ວປະເທດສາມາດຜະລິດເຂົ້າໄດ້ 3,43 ລ້ານໂຕນ, ເທົ່າກັບ 95%,
ການຜະລິດພືດຜັກຕ່າງໆ ໂດຍສະເພາະກໍ່ແມ່ນການປູກສາລີຫວານໄດ້ 183.000 ໂຕນ,
ເພີ່ມຂຶ້ນ 78%, ການຜະລິດຊີ້ນ-ປາ ແລະ ໄຂ່ໄດ້ທັງຫມົດ 315.300 ໂຕນ, ໃນນັ້ນ ຊີ້ນ
152 ແສນໂຕນ, ສຳລັບການລ້ຽງສັດເປັນສິນຄ້າໄດ້ມີການຂະຫຍາຍຕົວດີຂຶ້ນ
ດ້ວຍການນຳໃຊ້ແນວພັນປັບປຸງ ແລະ ກ້າວໄປສູ່ການລ້ຽງແບບອຸດສາຫະກຳ.

ປະຈຸບັນ ໃນທົ່ວປະເທດໄດ້ມີຟາມລ້ຽງສັດໃຫຍ່ງົວ-ຄວາຍ, ມີ 316 ຟາມ,
ເພີ່ມຂຶ້ນ 72 ຟາມ, ຫມູ 988 ຟາມ, ເພີ່ມຂຶ້ນ 74
ຟາມ,ໄດ້ຈັດຕັ້ງກຸ່ມຜະລິດແນວພັນເຂົ້າໄດ້ 1,3 ພັນກຸ່ມ, ກຸ່ມປູກສາລີ 110
ກຸ່ມ, ກຸ່ມປູກເຂົ້າເປັນສິນຄ້າຕິດພັນກັບກຸ່ມໂຮງສີ 152 ກຸ່ມ,
ເດັ່ນກວ່າຫມູ່ແມ່ນຢູ່ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ,
ກຸ່ມປູກຜັກອິນຊີ 59 ກຸ່ມ, ລ້ຽງສັດໃຫຍ່ 103 ກຸ່ມ ລ້ຽງແບ້ 57 ກຸ່ມ, ສັດປີກ 108
 1 / 2

ເປີດກອງປະຊຸມ ກະສິກຳປ່າໄມ້ທົ໋ວປະເທດ
ກຸ່ມ, ປູກຫຍ້າ 36 ກຸ່ມ, ສາມາດ
ກ້າວໄປສ້າງຕັ້ງເປັນສະມາຄົມຜູ້ຜະລິດກາເຟເຂດພູພຽງບໍລະເວນ
ເຊິ່ງປະກອບດ້ວຍກຸ່ມຜະລິດ 54 ກຸ່ມ ແລະ ສະມາຄົມຜູ້ສົ່ງອອກກາເຟລາວ 21 ກຸ່ມ
ທ່ານ ດຣ. ຕີ ພົມມະສັກກ່າວ.

ໂອກາດນີ້ ທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ
ໄດ້ເນັ້ນບາງບັນຫາຕ້ອງໄດ້ເອົາໃຈໃສ່ເປັນຕົ້ນ ດ້ານການປູກຝັງ
ກາຍເປັນສິນຄ້າເປັນທ່າແຮງຊຸກຍູ້ສົ່ງເສີມການເຮັດກະສິກຳ,
ການແບ່ງຂັ້ນຄຸ້ມລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ແລະ
ການສະເຫນີຈາກພາກທຸລະກິດ ໂດຍສະເພາະ ຜູ້ໃຫ້ບໍລິການກ່ຽວກັບເຂົ້າ
ມີບັນຫາຂໍ້ຄົງຄ້າງ ແລະ ທິດທາງແກ້ໄຂແນວໃດ
ເພື່ອຍູ້ແຮງການຜະລິດສິນຄ້າດ້ານເຂົ້າໃຫ້ພົ້ນເດັ່ນມີການປະສານ
ສົມທົບກັບທຸກຂະແຫນງການທີ່ກ່ຽວຂ້ອງທັງການອຳນວຍຄວາມສະດວກ,
ຕອບສະຫນອງວິຊາການ ແລະ ການເຂົ້າຫາແຫລ່ງທຶນ.

ດ້ານປ່າໄມ້ເຖິງວ່າລັດຖະບານໄດ້ກຳນົດ 3 ປະເພດປ່າຄື: ປ່າສະຫງວນ,
ປ່າປ້ອງກັນ ແລະ ປ່າຜະລິດໃຫ້ຄົ້ນຄວ້າໃນການຮັກສາປ່າໃຫ້ປົກຫຸ້ມເຖິງ
70% ໃນປີ 2020.

ທີ່ມາຂອງຂ່າວ:
 2 / 2